**Special Economic Zone, Lecture three: Principles and Regulations relating to the establishment of SEZ**

**ຂັ້ນຕອນການສ້າງຕັ້ງເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ**

ເຂດເສດຖະກິດພິເສດ ສ້າງຕັ້ງຂຶ້ນຕາມສັນຍາ ລະຫວ່າງ ຜູ້ລົງທຶນກັບ ຄະນະບໍລິຫານ ແລະ/ຫລື ສະພາບໍລິຫານເສດຖະກິດເຂດເສດຖະກິດພິເສດ.

ເຂດເສດຖະກິດສະເພາະ ຢູ່ນອກເຂດເສດຖະກິດພິເສດ ສ້າງຕັ້ງຂຶ້ນຕາມຂັ້ນຕອນການພິຈາລະນາຕາມດຳລັດ ແລະ ຕາມສັນຍາ ລະຫວ່າງລັດຖະບານ ແລະ ຜູ້ພັດທະນາ, ເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ ເອີ້ນຫຍໍ້ "ຂພສ", ຂຽນເປັນພາສາອັງກິດ: Special Economic Zone and Specific Economic Zone "SEZ". ເນື່ອງຈາກວ່າຮູບແບບຂອງເຂດເສດຖະກິດພິເສດ ຢູ່ ສປປລາວ ໄດ້ກຳໄວ້ຄື: ເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ ຕາມດຳລັດວ່າດ້ວຍເຂດເສດຖະກິດພິເສດ ປີ 2010.

**1. ຫຼັກການ ແລະ ການສະເໜີສ້າງຕັ້ງ**

❖ **ການສ້າງຕັ້ງ** ເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະສ້າງຕັ້ງຕາມຫຼັກການດັ່ງນີ້:

1) ກຳນົດແຈ້ງວັດຖຸປະສົງຂອງເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ;
2) ກຳນົດແຈ້ງຜົນປະໂຫຍດຂອງລັດ, ຜູ້ພັດທະນາ ແລະ ປະຊາຊົນ;
3) ເປັນເຂດທີ່ເໝາະສົມກັບວັດຖຸປະສົງຂອງແຕ່ລະເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ;
4) ກຳນົດເນື້ອທີ່ ແລະ ເຂດແດນຢ່າງຈະແຈ້ງ;
5) ມີນະໂຍບາຍສົ່ງເສີມທາງດ້ານເສດຖະກິດສະເພາະ;
6) ມີລະບົບບໍລິຫານດ້ານເສດຖະກິດທີ່ເປັນເອກະລາດຕາມແຕ່ລະເຂດ;
7) ຢູ່ພາຍໃຕ້ການຄຸ້ມຄອງໂດຍກົງຂອງລັດຖະບານ ຫຼື ອົງການປົກຄອງແຂວງ ຕາມການຕົກລົງຂອງ ລັດຖະບານ;
8) ຮັບປະກັນຄວາມໝັ້ນຄົງ, ຄວາມສະຫງົບ, ຄວາມປອດໄພ ແລະ ການປົກປັກຮັກສິ່ງແວດລ້ອມພາຍໃນເຂດ;
9) ຮັບປະກັນການພັດທະນາແບບຍືນຍົງ, ປົກປັກຮັກສາສິ່ງແວດລ້ອມ, ສົ່ງເສີມ ແລະ ອະນຸລັກວັດທະນາທຳອັນດີງາມຂອງຊາດ.

❖ **ການສະເໜີສ້າງຕັ້ງ**: ຜູ້ທີ່ມີຈຸດປະສົງສ້າງຕັ້ງເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ ຕ້ອງຍື່ນຄຳຮ້ອງຕໍ່ *ຄະນະກຳມະການແຫ່ງຊາດ ເພື່ອຄຸ້ມຄອງເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ* (ຄຂພສ) ໂດຍຜ່ານອົງການປະຈຳການ ຊຶ່ງປະກອບດ້ວຍເອກະສານເບື້ອງຕົ້ນດັ່ງນີ້:

1) ຮ່າງແຜນແມ່ບົດການພັດທະນາ;
2) ຮ່າງບົດວິພາກເສດຖະກິດ-ເຕັກນິກ;
3) ຮ່າງບົດປະເມີນຜົນກະທົບຕໍ່ວັດທະນະທຳ-ສັງຄົມ ແລະ ສິ່ງແວດລ້ອມ;
4) ຮ່າງສັນຍາພັດທະນາໂຄງການ ຂພສ;
5) ເອກະສານຢັ້ງຢືນຖານະການເງິນ;
6) ເອກະສານຢັ້ງຢືນຖານະບຸກຄົນ ຫຼື ຖານະນິຕິບຸກຄົນ;
7) ເອກະສານອື່ນໆທີ່ກ່ຽວຂ້ອງ.

ອົງການປົກຄອງທ້ອງຖິ່ນເປັນຜູ້ກຳນົດ ແລະ ສະເໜີເຂດເສດຖະກິດພິເສດຂອງຕົນ ໂດຍປະສານສົມທົບກັບຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຂັ້ນສູນກາງ.

## 2. ການພິຈາລະນາສ້າງຕັ້ງ

ການພິຈາລະນາສ້າງຕັ້ງ ເຂດເສດຖະກິດພິເສດ ມີ 2 ກໍລະນີຄື:

- ກໍລະນີທີ 1: ການພິຈາລະນາສ້າງຕັ້ງ ຂສພ ທີ່ກຳນົດໄວ້ໃນແຜນຍຸດທະສາດການພັດທະນາ ຂພສ;
- ກໍລະນີທີ 2: ການພິຈາລະນາສ້າງຕັ້ງທີ່ບໍ່ໄດ້ກຳນົດໄວ້ໃນແຜນຍຸດທະສາດການພັດທະນາ ຂພສ.

### 2.1 ການພິຈາລະນາສ້າງຕັ້ງ ຂສພ ທີ່ກຳນົດໄວ້ໃນແຜນຍຸດທະສາດການພັດທະນາ ຂພສ:

1) ຜູ້ທີ່ມີຈຸດປະສົງພັດທະນາ ຂພສ ຍື່ນເອກະສານຂໍສ້າງຕັ້ງຕໍ່ ຄະນະຄຸ້ມຄອງເຂດເສດຖະກິດພິເສດ ໂດຍຜ່ານອົງການປະຈຳການ ຄຂພສ ຕາມແບບພິມເອກະສານທີ່ກຳນົດອອກ;
2) ພາຍຫຼັງທີ່ຮັບຄຳຮ້ອງຂໍສ້າງຕັ້ງ ຂພສ ແລ້ວ, ອົງການປະຈຳການ ຄຂສພ ປະສານສົມທົບກັບຂະແໜງ ການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງຄົ້ນຄວ້າ, ເຈລະຈາຮ່າງສັນຍາເບື້ອງຕົ້ນກັບຜູ້ພັດທະນາແລ້ວນຳສະເໜີຕໍ່ກອງປະຊຸມ ຄຂພສ ຫຼື ລັດຖະບານໃນກໍລະນີທີ່ຈຳເປັນ.

### 2.2. ການພິຈາລະນາສ້າງຕັ້ງທີ່ບໍ່ໄດ້ກຳນົດໄວ້ໃນແຜນຍຸດທະສາດການພັດທະນາ ຂພສ:

1) ຜູ້ທີ່ມີຈຸດປະສົງພັດທະນາ ຂພສ ຍື່ນເອກະສານຂໍສ້າງຕັ້ງ ຂສພ ຕໍ່ ຄຂພສ ໂດຍຜ່ານອົງການປະຈຳການ ຄຂສພ ຕາມແບບຟອມເອກະສານທີ່ກຳນົດອອກ;
2) ພາຍຫຼັງທີ່ໄດ້ຮັບຄຳຮ້ອງຂໍສ້າງຕັ້ງ ຂສພ ແລ້ວ, ອົງການປະຈຳການ ຄຂພສ ປະສານສົມທົບກັບຂະ ແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງຕົກລົງທາງດ້ານຫຼັກການ;
3) ພາຍຫຼັງທີ່ໄດ້ຮັບການສະໜັບສະໜູນ ທາງດ້ານຫຼັກການຈາກຂະແໜງການ ແລະ ທ້ອງຖິ່ນແລ້ວ, ອົງການປະຈຳການ ຄຂພສ ລາຍງານຕໍ່ປະທານ ຄຂພສ ເພື່ອຂໍການພິຈາລະນາແຕ່ງຕັ້ງຄະນະຮັບຜິດ ຊອບ ເພື່ອສຶກສາເງື່ອນໄຂ ແລະ ຄວາມເປັນໄປໄດ້ໃນເບື້ອງຕົ້ນຂອງການສ້າງຕັ້ງ ຂພສ;
4) ການແຕ່ງຕັ້ງຄະນະຮັບຜິດຊອບສ້າງຕັ້ງ ຂພສ ແມ່ນມອບໝາຍຄວາມເປັນເຈົ້າການ, ຄວາມຮັບຜິດ ຊອບ ແລະ ເປັນຫົວໜ້າຄະນະໃຫ້ແກ່ເຈົ້າແຂວງ. ເຈົ້າຄອງນະຄອນບ່ອນທີ່ມີການຂໍສ້າງຕັ້ງ ຂພສ ເພື່ອຄົ້ນຄວ້າກ່ຽວກັບການກຳນົດຂອບເຂດເນື້ອທີ່ດິນ, ທ່າແຮງ ແລະ ປະສິດທິຜົນທາງດ້ານເສດຖະກິດ-ສັງຄົມ;
5) ເມື່ອມີການແຕ່ງຕັ້ງຢ່າງເປັນທາງການແລ້ວ, ຄະນະຮັບຜິດຊອບດັ່ງກ່າວ ເປີດກອງປະຊຸມຄັ້ງປະຖົມມະລຶກ ເພື່ອປຶກສາຫາລືແບ່ງງານ ແລະ ວາງແຜນການເຄື່ອນໄຫວ ວຽກງານລະອຽດ, ຫົວໜ້າຄະນະດັ່ງກ່າວມີສິດແຕ່ງຕັ້ງກອງເລຂາຂອງຕົນຂຶ້ນ ເພື່ອຊ່ວຍຈັດຕັ້ງປະຕິບັດວຽກງານໃຫ້ສຳເລັດ;
6) ອົງການປະຈຳການ ຄຂພສ ສັງລວມຜົນການສຶກສາ, ຜົນການເຈລະຈາສັນຍາສຳປະທານ ແລະ ການ ຄົ້ນຄວ້າຂອງຄະນະຮັບຜິດຊອບສ້າງຕັ້ງ ເພື່ອສະເໜີຕໍ່ກອງປະຊຸມເລຂາຜູ້ປະຈຳການ ແລະ ບໍ່ປະຈຳ ການ ເມື່ອໄດ້ຮັບການຢັ້ງຢືນ ເຫັນດີ ເປັນລາຍລັກອັກສອນຈາກຄະນະຮັບຜິດຊອບສ້າງຕັ້ງແລ້ວອົງ ການປະຈຳການ ຄຂພສ ຈຶ່ງນຳສະເໜີຕໍ່ກອງປະຊຸມ ຄຂພສ ພິຈາລະນາ;
7) ກໍລະນີ ຄຂພສ ຕົກລົງອະນຸມັດສ້າງຕັ້ງ ຂສພ ປະທານ ຄຂພສ ອອກໃບທະບຽນສຳປະທານ ຂພສກໍລະນີທີ່ເກີນຂອບເຂດສິດ ແລະ ພາລະບົດບາດຂອງຕົນ ຄຂພສ ສະເໜີລັດຖະບານພິຈາລະນາ;
8) ກໍລະນີ ຄຂສພ ປະຕິເສດການສ້າງຕັ້ງ ຂສພ ອົງການປະຈຳການ ຄຂພສ ແຈ້ງຕອບປະຕິເສດໃຫ້ຜູ້ສະ ເໜີພັດທະນາ ຂພສ ຊາບພ້ອມດ້ວຍເຫດຜົນ.
9) ຖ້າວ່າເປັນໂຄງການທີ່ນອນຢູ່ໃນແຜນແມ່ບົດການພັດທະນາ ຂພສ ທີ່ລັດຖະບານຮັບຮອງເອົາແລ້ວນັ້ນ, ຂັ້ນຕອນພິຈາລະນາແມ່ນໃຫ້ເລືອກເຟັ້ນເອົາຜູ້ພັດທະນາຕາມແຕ່ລະກໍລະນີ ດ້ວຍວິທີການຕ່າງໆ ເປັນຕົ້ນການ ປຽບທຽບ,

ການປະມູນ ຫຼື ການປະເມີນຜົນ ໂດຍ ຄຂພສ ບົນພື້ນຖານການສົມທົບກັບຂະແໜງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ.

10) ສຳລັບການລົງທຶນພັດທະນາໂຄງລ່າງພື້ນຖານທີ່ເຊື່ອມຕໍ່ ຂພສ ແມ່ນມອບໃຫ້ອົງການປົກຄອງທ້ອງຖິ່ນເປັນຜູ້ຂຶ້ນແຜນງົບປະມານຕາມຂັ້ນຕອນຂອງກົດໝາຍວ່າດ້ວຍການລົງທຶນຂອງລັດ.

(ການອອກໃບທະບຽນສຳປະທານສ້າງຕັ້ງ ຂພສ ແມ່ນອົງການປະຈຳການ ຄຂພສ ເປັນຜູ້ອອກໃບ ທະບຽນສຳປະທານສ້າງຕັ້ງ ຂສພ ໃຊ້ແທນໃບທະບຽນວິສາຫະກິດ ຕາມກົດໝາຍວ່າດ້ວຍວິສາຫະກິດ ຊຶ່ງ ລວມມີເລກລະຫັດປະຈຳຕົວຂອງຜູ້ເສຍອາກອນ ຕາມກົດໝາຍວ່າດ້ວຍ ສ່ວຍສາອາກອນ ເມື່ອໄດ້ທະບຽນສຳປະທານສ້າງຕັ້ງ ຂພສ ແລ້ວ ສາມາດດຳເນີນທຸລະກິດຖືກຕ້ອງຕາມກົດໝາຍ ຂອງ ສປປ ລາວ).

**3. ເງື່ອນໄຂການກຳນົດເຂດເສດຖະກິດພິເສດ.**

ໃນການກຳນົດເຂດເສດຖະກິດພິເສດ ຕ້ອງມີເງື່ອນໄຂດັ່ງນີ້:

1) ມີວັດຖຸປະສົງຂອງເຂດເສດຖະກິດພິເສດ ຢ່າງຈະແຈ້ງ;
2) ມີທີ່ຕັ້ງທີ່ເໝາະສົມ, ກຳນົດເນື້ອທີ່ ແລະ ແລະ ເຂດແດນຢ່າງຈະແຈ້ງ;
3) ສອດຄ່ອງກັບແຜນພັດທະນາເສດຖະກິດສັງຄົມ ຂອງຊາດ;
4) ສອດຄ່ອງກັບແຜນຍຸດທະສາດ ທີ່ດິນແຫ່ງຊາດ ແລະ ແຜນຍຸດທະສາດພັດທະນາ ຂສພ[1]

ການສ້າງຕັ້ງເຂດເສດຖະກິດພິເສດນັ້ນ, ນອກຈາກມີເງື່ອນໄຂທີ່ໄດ້ກຳນົດໄວ້ຢູ່ຂ້າງເທິງນີ້ແລ້ວ ຍັງມີບາງເງື່ອນໄຂເພີ່ມເຕີມດັ່ງນີ້:

1) ກຳນົດອາຍຸການພັດທະນາເຂດຢ່າງຈະແຈ້ງ; 2) ການກຳນົດແຈ້ງຜົນປະໂຫຍດຂອງລັດ, ປະຊາຊົນ, ຜູ້ພັດທະນາ ແລະ ຜູ້ລົງທຶນ; 3) ກຳນົດນະໂຍບາຍສົ່ງເສີມຢ່າງຈະແຈ້ງ; 4) ຜ່ານການປະເມີນຜົນທາງດ້ານເສດຖະກິດ-ເຕັກນິກ ແລະ ສິ່ງແວດລ້ອມ-ສັງຄົມ; ຢູ່ພາຍໃຕ້ການຄຸ້ມຄອງຂອງລັດຖະບານ ຫຼື ອົງການປົກຄອງຂັ້ນແຂວງ.

ນອກຈາກທີ່ໄດ້ກ່າວມາຂ້າງເທິງແລ້ວ, ຜູ້ທີ່ມີຈຸດປະສົງລົງທຶນພັດທະນາເຂດເສດຖະກິດພິເສດ ຕ້ອງຍື່ນຄຳຮ້ອງພ້ອມດ້ວຍເອກະສານປະກອບ ຕໍ່ຫ້ອງການບໍລິຫານການລົງທຶນປະຕູດຽວ ຂັ້ນສູນກາງ. ໃນກໍລະນີມີຜູ້ສະເໜີຂໍພັດທະນາເຂດເສດຖະກິດພິເສດແຫ່ງດຽວແຕ່ ສອງຄົນຂຶ້ນໄປ ຕ້ອງຜ່ານການຄັດເລືອກ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ວ່າດ້ວຍການສົ່ງເສີມການລົງທຶນ. ຜູ້ທີ່ມີຈຸດປະສົງລົງທຶນພັດທະນາໃນເຂດເສດຖະກິດພິເສດ ຕ້ອງໄດ້ຜ່ານການພິຈາລະນາຕາມ ສອງຂັ້ນຕອນ ຄື: ຂັ້ນຕອນເຊັນບົດບັນທຶກຄວາມເຂົ້າໃຈ ແລະ ຂັ້ນຕອນການພັດທະນາ. ຊຶ່ງເອກະສານປະກອບການສະເໜີເຊັນບົດບັນທຶກຄວາມເຂົ້າໃຈ, ປະກອບດ້ວຍເອກະສານດັ່ງນີ້: 1) ໃບຄຳຮ້ອງ; 2) ເອກະສານຢັ້ງຢືນຖານະນິຕິບຸກຄົນ; 3) ເອກະສານຢັ້ງຢືນຖານະການເງິນ; 4) ແຜນວາດເບື້ອງຕົ້ນ ເນື້ອທີ່ດິນຂອງໂຄງການ ແລະ ເອກະສານອື່ນໆ ທີ່ໄດ້ກຳນົດໄວ້ໃນໃບຄຳຮ້ອງ.

ໃນການພິຈາລະນາເຊັນສັນຍາພັດທະນາ, ພາຍຫຼັງສຳເລັດການສຶກສາຂໍ້ມູນ, ປະກອບເອກະສານຖືກຕ້ອງ, ຄົບຖ້ວນ ແລະ ຮັບຮອງເອົາໂດຍກອງປະຊຸມວິຊາການ ຂອງຂະແໜງການ ແລະ ທ້ອງຖິ່ນແລ້ວ ຫ້ອງການສົ່ງເສີມ ແລະ ຄຸ້ມຄອງ ເຂດເສດຖະກິດພິເສດ ລາຍງານຕໍ່ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຂັ້ນສູນກາງ, ເມື່ອໄດ້ຮັບການຕົກລົງເຫັນດີແລ້ວ ກະຊວງແຜນການ ແລະ ການລົງທຶນ ສະເໜີລັດຖະບານອະນຸມັດ ເຊັນສັນຍາພັດທະນາ ກັບຜູ້ພັດທະນາເຂດ ແລະ ອອກໃບອະນຸຍາດລົງທຶນພັດທະນາຢ່າງເປັນທາງການ.

---

[1] ມາດຕາ 10 ຂອງດຳລັດ ວ່າດ້ວຍເຂດເສດຖະກິດພິເສດ ສະບັບເລກທີ 118/ ລບ, ລົງວັນທີ 07.06.2018, ໝວດທີ 2 ໜ້າທີ 3

ການສະເໜີພັດທະນາເຂດເສດຖະກິດພິເສດ ເພື່ອດໍາເນີນກິດຈະການ ຫຼື ຂະແໜງການອື່ນ ທີ່ບໍ່ໄດ້ກໍານົດໄວ້ໃນມາດຕາ 2 ຂອງດໍາລັດ ວ່າດ້ວຍເຂດເສດຖະກິດພິເສດ ປີ 2018 ນັ້ນ, ຊຶ່ງເຫັນວ່າມີຄວາມສໍາຄັນຕໍ່ການພັດທະນາເຂດເສດຖະກິດ-ສັງຄົມ, ລັດຖະບານຈະລາຍງານຕໍ່ສະພາແຫ່ງຊາດ ພິຈາລະນາຕົກລົງ.

ພາຍຫຼັງທີ່ເຂດເສດຖະກິດພິເສດໄດ້ຮັບການສ້າງຕັ້ງແລ້ວ, ເຂດດັ່ງກ່າວຕ້ອງໄດ້ຈັດຕັ້ງປະຕິບັດ ແລະ ເຄື່ອນໄຫວຖືກຕ້ອງຕາມຫຼັກການພື້ນຖານດັ່ງນີ້: ຕ້ອງໄດ້ເຄົາລົບ ແລະ ປະຕິບັດກົດໝາຍຢ່າງເຂັ້ມງວດ ພ້ອມດຽວກັນນີ້ ກໍ່ຕ້ອງໄດ້ປະຕິບັດຕາມສັນຍາພັດທະນາ ແລະ ນະໂຍບາຍສົ່ງເສີມ ຕາມທີ່ໄດ້ກໍານົດໄວ້ໃນດໍາລັດ ແລະ ລະບຽບການສະເພາະ. ການເຄື່ອນໄຫວ ແລະ ພັດທະນາເຂດດັ່ງກ່າວຕ້ອງຮັບປະກັນການພັດທະນາແບບຍືນຍົງ, ໃຫ້ຄວາມສໍາຄັນໃນການປົກປັກຮັກສາສິ່ງແວດລ້ອມ ແລະ ໃຫ້ການສົ່ງເສີມ ແລະ ອະນຸລັກວັດທະນາທໍາອັນດີງາມຂອງຊາດ,ຄຸ້ມຄອງລິຫານຕາມກົນໄກການບໍລິການປະຕູດຽວ ຮັບປະກັນໃຫ້ວຽກງານດັ່ງກ່າວມີຄວາມຄືບໜ້າ ແລະ ພັດທະນາໄປຕາມແຜນທີ່ໄດ້ກໍານົດໄວ້ ແລະ ສາມາດຕິດຕາມ ກວດສອບຈາກຂະ ແໜງການທີ່ກ່ຽວຂ້ອງ ແລະ ລາຍງານສະພາບການພັດທະນາເປັນປປະຈໍາຕາມທີ່ໄດ້ກໍານົດໄວ້ໃນດໍາລັດ ແລະ ລະບຽບການ. ຮັບປະກັນທາງດ້ານຄວາມໝັ້ນຄົງ, ຄວາມສະຫງົບ, ຄວາມປອດໄພ ພາຍໃນເຂດເສດຖະກິດພິເສດ ແລະ ແຂວງ, ນະຄອນຫຼວງ ບ່ອນເຂດເສດຖະກິດພິເສດຕັ້ງຢູ່.

ແນວໃດກໍ່ຕາມ, ສາມາດສະຫຼຸບໄດ້ວ່າ ລະບຽບ ແລະ ຫຼັກການໃນການຄຸ້ມຄອງ ເຂດຖະກິດພິເສດນັ້ນ ກໍ່ໄດ້ມີການພັດທະນາ ແລະ ປັບປຸງເປັນແຕ່ລະໄລຍະ ເພື່ອໃຫ້ມີຄວາມສອດຄ່ອງກັບສະພາບການພັດທະນາເຂດເສດຖະກິດພິເສດໃນຕົວຈິງ. ໂດຍສະເພາະ ແມ່ນການສ້າງຕັ້ງ ແລະ ການພັດທະນາເຄື່ອນໄຫວວຽກງານເຂດເສດຖະກິດພິເສດ. ແຕ່ສິ່ງທີ່ສໍາຄັນ ຄືການສ້າງຕັ້ງ ແລະ ການຈັດຕັ້ງປະຕິບັດວຽກງານເຂດເສດຖະກິດພິເສດ. ພາຍຫຼັງທີ່ຜູ້ພັດທະນາໄດ້ຮັບອະນຸຍາດໃນການສ້າງຕັ້ງ ແລະ ພັດທະນາເຂດຕາມຂັ້ນຕອນຂອງກົດໝາຍ ແລະ ລະບຽບການແລ້ວ, ຕ້ອງໄດ້ປະຕິບັດຕາມ ບົດບັນທຶກການຮ່ວມມື ແລະ ແຜນພັດທະນາເຂດຢ່າງເຂັ້ມງວດ ເປັນຕົ້ນແມ່ນການແຜນການພັດທະນາພື້ນຖານໂຄງລ່າງ, ການປົກປັກຮັບສາສິ່ງແວດລ້ອມ ແລະ ຮັບປະກັນການພັດທະນາແບບຍືນຍົງ ແລະ ຮັບປະກັນໄດ້ເຖິງຄວາມສະຫງົບ ແລະ ຄວາມໝັ້ນຄົງຂອງປະເທດ.

ໃນປັດຈຸບັນ, ວຽກງານການສ້າງຕັ້ງ ແລະ ການພັດທະນາເຂດເສດຖະກິດພິເສດ ໄດ້ມີການພັດທະນາ ແລະ ປັບປຸງໃຫ້ຄວາມວອ່ງໄວ ແລະ ງ່າຍໃນການ ອະນຸມັດ ແລະ ສາມາດຕິດຕາມກວດກາໄດ້ ເນື່ອງຈາກວ່າລັດຖະບານ ໄດ້ມີນະໂຍບາຍ ໃຫ້ການບໍລິການການລົງທຶນຜ່ານປະຕູດຽວ. ຊຶ່ງວຽກງານດັ່ງກ່າວນີ້ ແມ່ນຂຶ້ນກັບກະຊວງແຜນການ ແລະ ການລົງທຶນ. ຊຶ່ງກະຊວງແຜນການ ແລະ ການລົງທຶນ ໄດ້ມີການສ້າງຕັ້ງໜ່ວຍງານທີ່ຮັບຜິດຊອບການໃຫ້ບໍລິການການລົງທຶນຂຶ້ນມາ ເພື່ອອໍານວຍຄວາມສະດວກ ແລະ ໃຫ້ຄໍາປຶກສາກ່ຽວກັບການລົງທຶນ, ໃນນີ້ ຈະກວມເອົາວຽກງານການສ້າງຕັ້ງເຂດເສດຖະກິດພິເສດ, ໜ່ວຍງານດັ່ງກ່າວ ປະກອບດ້ວຍ ຄະນະວິຊາການ ຈາກຂະແໜງການ ແລະ ກະຊວງຕ່າງໆ ທີ່ກ່ຽວຂ້ອງ. ຊຶ່ງມີໜ້າທີ່ຫຼັກໃນການອໍານວຍຄວາມສະດວກ, ໃຫ້ຂໍ້ມູນ ແລະ ປະສານງານກັບພາກສ່ວນທີ່ກ່ຽວຂ້ອງ ກ່ຽວກັບວຽກງານການລົງທຶນ ໃຫ້ແກ່ ນັກລົງທຶນ ແລະ ຜູ້ທີ່ມີຄວາມສົນໃຈທີ່ຈະພັດທະນາການລົງທຶນໃນ ສປປ ລາວ. ນອກຈາກນີ້, ໜ່ວຍງານດັ່ງກ່າວ ຮັບຄໍາຮ້ອງ ແລະ ຄົ້ນຄ້ວາ ຄໍາຮ້ອງຂອງນັກລົງທຶນ, ພ້ອມທັງນໍາ ສະເໜີ ແລະ ລາຍງານຕໍ່ຄະນະກໍາມະການ ຄຸ້ມຄອງ ແລະ ສົ່ງເສີມການລົງທຶນຂັ້ນສູນກາງຮັບຊາບ ກ່ຽວກັບວຽກງານການລົງທຶນເປັນແຕ່ລະໄລຍະຕາມລະບຽບການ.

ຄະນະກໍາມະການ ສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ແມ່ນ ຄະນະກໍາມະການ ທີ່ສ້າງຕັ້ງຂຶ້ນໂດຍລັດຖະບານເພື່ອເຮັດໜ້າທີ່ສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຊຶ່ງຂຽນຫຍໍ້ວ່າ “ ຄລທ” ຄະນະກໍາມະການດັ່ງກ່າວນີ້ ມີ ສອງ ຂັ້ນຄື: ຄະນະກໍາມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຂັ້ນສູນກາງ, ຂຽນຫຍໍ້ “ຄລທ.ສ” ແລະ ຄະນະກໍາມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຂັ້ນ ຂັ້ນແຂວງ, ຂຽນຫຍໍ້ ວ່າ “ຄລທ.ຂ”.

ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຂັ້ນສູນກາງ ປະກອບດ້ວຍ: 1) ຮອງນາຍົກລັດຖະມົນຕີ ເປັນປະທານ; 2) ລັດຖະມົນຕີ ກະຊວງແຜນການ ແລະ ການລົງທຶນ ເປັນຮອງປະທານ ທັງເປັນຜູ້ປະຈຳການ; 3) ລັດຖະມົນຕີ ກະຊວງອຸດສະຫະກຳ ແລະ ການຄ້າ ເປັນຮອງປະທານ; 4) ຮອງລັດຖະມົນຕີ ກະຊວງແຜນການ ແລະ ການລົງທຶນ ເປັນຄະນະ; 5) ລັດຖະມົນຕີ ກະຊວງການເງິນ ເປັນຄະນະ; 6) ຮອງລັດຖະມົນຕີ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເປັນຄະນະ; 7) ຮອງລັດຖະມົນຕີ ກະຊວງ ພະລັງງານ ແລະ ບໍ່ແຮ່ ເປັນຄະນະ; 8) ຮອງລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ເປັນຄະນະ; 9) ຮອງ ລັດຖະມົນຕີ ກະຊວງ ແຮງງານ ແລະ ສະຫວັດດີການສັງຄົມ ເປັນຄະນະ; 10) ຮອງລັດຖະມົນຕີ ກະຊວງໂຍທາທິການ ແລະ ຂົນສົ່ງ ເປັນຄະນະ; 11) ຮອງລັດຖະມົນຕີ ກະຊວງຖະແຫຼງຂ່າວ, ວັດທະນາທຳ ແລະ ການທ່ອງທ່ຽວ ເປັນຄະນະ ແລະ 12) ຮອງລັດຖະມົນຕີ ກະຊວງປ້ອງກັນຄວາມສະຫງົບ ເປັນຄະນະ. ຊຶ່ງຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຂັ້ນສູນກາງ ເປີດກອງປະຊຸມ ຢ່າງໜ້ອຍເດືອນລະສອງຄັ້ງ[2].

ສິ່ງທີ່ຂ້າພະເຈົ້າ ໄດ້ກ່າວ ແລະ ອະທິບາຍມາຂ້າງເທິງນັ້ນ ແມ່ນ ລະບຽບ, ຫຼັກການການ, ຂັ້ນຕອນ ແລະ ກົນໄກໃນສ້າງຕັ້ງ ແລະ ຄຸ້ມຄອງເຂດເສດຖະກິດພິເສດ ໃນ ສປປລາວ. ຊຶ່ງລະບຽບ, ຫຼັກການ, ຂັ້ນຕອນໃນການຂໍອະນຸມັດໃນການສ້າງຕັ້ງນັ້ນ ອາດຈະມີການປ່ຽນແປງ ແລະປັບປຸບໃຫ້ແທດເໝາະກັບສະພາບຄວາມເປັນຈິງ ແລະ ກົນໄກການຄຸ້ມຄອງຂອງລັດຖະບານແຕ່ລະໄລຍະ.

ແຕ່ສິ່ງສຳຄັນທີ່ຜູ້ພັດທະນາຕ້ອງໄດ້ເອົາໃຈໃສ່ທາງດ້ານຫຼັກການ ກໍຄື: ບົດບັນທຶກການຮ່ວມມື, ແຜນແມ່ບົດໃນການພັດທະນາເຂດ. ນອກຈາກນີ້, ຍັງຕ້ອງເອົາໃຈໃສ່ ແລະ ປະຕິບັດຕາມລະບຽບ ແລະ ກົດໝາຍທີ່ກ່ຽວຂ້ອງ ຊຶ່ງມີຫຼາຍ ກົດໝາຍ ແລະ ຫຼາຍພາກສ່ວນທີ່ກ່ຽວຂ້ອງ.

**ເອກະສານອ້າງອີງ**


1. ມາດຕາ 10 ຂອງດຳລັດ ວ່າດ້ວຍເຂດເສດຖະກິດພິເສດ ສະບັບເລກທີ 118/ ລບ, ລົງວັນທີ 07.06.2018, ໝວດທີ 2 ໜ້າທີ 3

2. ມາດຕາ 76, ກົດໝາຍ ວ່າດ້ວຍ ການສົ່ງເສີມການລົງທຶນ (ສະບັບປັບປຸງ ປີ 2016)


[2] ມາດຕາ 76, ກົດໝາຍ ວ່າດ້ວຍ ການສົ່ງເສີມການລົງທຶນ (ສະບັບປັບປຸງ ປີ 2016)